ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງໄຍທາທິການ ແລະຂົນສົ່ງ

ເລກທີ: 15862 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ: 13 ກັນຍາ 2012

## <u>ຄຳສັ່ງແນະນຳຂອງລັດຖະມົນຕີວ່າການ</u>

## <u>ວ່າດ້ວຍການຜັນຂະຫຍາຍການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ຂອງຂະແໜງໄຍທາທິການ ແລະຂົນສົ່ງ (ສຳລັບ 51 ເມືອງເປົ້າໝາຍທົດລອງ)</u>

ເຖິງ: - ທ່ານຫົວໜ້າຫ້ອງການ, ກົມ, ກອງ, ອົງການ ແລະສະຖາບັນ.
- ທ່ານຫົວໜ້າພະແນກ ຍທຂ ບັນດາແຂວງ ແລະນະຄອນຫລວງວຽງຈັນ.
- ທ່ານຫົວໜ້າຫ້ອງການ ຍທຂ ບັນດາເມືອງ.

- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ, ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012 ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ (3 ສ້າງ).
- ອີງຕາມຄຳສັ່ງແນະນຳເພີ່ມເຕີມຂອງຄະນະເລຂາທິການສູນກາງພັກ, ສະບັບເລກທີ 21/ຄລສພ, ລົງວັນທີ 7/8/2012 ກ່ຽວກັບການສືບຕໍ່ຊຸກຍູ້ການປະຕິບັດມະຕິ 03/ກມສພ.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 15/6/2012 ວ່າດ້ວຍການທົດລອງ 3 ສ້າງ.
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 104/ນຍ, ລົງວັນທີ 4/9/2012 ວ່າດ້ວຍການຄຸ້ມຄອງພະນັກງານ-ລັດຖະກອນຕາມຂະແໜງການຢູ່ທ້ອງຖິ່ນ.

ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍວຽກງານສາມສ້າງໃຫ້ກາຍເປັນຮູບປະທຳໃນຂະແໜງ ຍທຂ, ໂດຍສະເພາະແມ່ນການເຮັດທົດລອງໃນ 51 ເມືອງ ແລະ 105 ບ້ານນັ້ນ, ລັດຖະມົນຕີວ່າການກະຊວງ ຍທຂ ອອກຄຳສັ່ງແນະນຳດັ່ງນີ້:

1. **ຈຸດປະສົງ.**

ຄຳສັ່ງແນະນຳສະບັບນີ້ມີຈຸດປະສົງເພື່ອກຳນົດຫລັກການ ແລະລະບຽບການ ແນໃສ່ກຳນົດໃຫ້ແຈ້ງຕື່ມກ່ຽວກັບສິດ, ໜ້າທີ່ ແລະຄວາມຮັບຜິດຊອບດ້ານການຄຸ້ມຄອງບໍລິຫານລັດ ແລະ ການບໍລິການສັງຄົມຂອງຂະແໜງ ຍທຂ ລະຫວ່າງກະຊວງ ຍທຂ, ພະແນກ ຍທຂ ແຂວງ, ນະຄອນຫລວງ, ຫ້ອງການ ຍທຂ ເມືອງ ແລະບ້ານ, ແນໃສ່ຜັນຂະຫຍາຍມະຕິສະບັບເລກທີ 03 ຂອງກົມການເມືອງສູນກາງພັກ ເຂົ້າສູ່ການຈັດຕັ້ງປະຕິບັດວຽກງານທົດລອງສາມສ້າງໃນຂະແໜງໄຍທາທິການ ແລະຂົນສົ່ງ, ຊຶ່ງເປັນຂະແໜງປາຍແຫລມໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ປູພື້ນໃຫ້ແກ່ການຫັນເປັນອຸດສະຫະກຳ ແລະທັນສະໄໝ ແລະເປັນພື້ນຖານຂອງການພັດທະນາແບບຍືນ ຍົງຢູ່ປະເທດເຮົາໃຫ້ປະກົດຜົນເປັນຈິງ.

2. **ລະດັບຄາດໝາຍ.**

- ເພື່ອນຳໃຊ້ພົດທ່າແຮງຂອງແຕ່ລະທ້ອງຖິ່ນ ໃນການສຸມທຶນຮອບເຂົ້າໃສ່ການພັດທະນາພື້ນຖານໂຄງລ່າງ ດ້ານ ຍທຂ ດ້ວຍການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຕິດພັນແຜນພັດທະນາຂອງແຂວງ, ນະຄອນຫລວງ, ເມືອງ ແລະບ້ານ ໃນແຕ່ລະໄລຍະ.
- ເພີ່ມທະວີຄວາມເປັນເຈົ້າ ແລະຄວາມຮັບຜິດຊອບຂອງທ້ອງຖິ່ນໃຫ້ຫລາຍຂື້ນ ໃນການກໍ່ສ້າງ ແລະບູລະນະຮັກສາຕາໜ່າງເສັ້ນທາງຄົມມະນາຄົມ, ການຄຸ້ມຄອງວຽກງານຂົນສົ່ງ, ການພັດທະນາຕົວເມືອງ ແລະຊົນນະບົດ, ການປ້ອງກັນຕະຝັ່ງເຈື່ອນ ແລະໜ້າວຽກອື່ນໆ ຕາມຈຸດພິເສດຂອງແຕ່ລະທ້ອງຖິ່ນ ໃຫ້ມີປະສິດທິຜົນສູງສຸດ.
- ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນໃນທົ່ວສັງຄົມ ໃນການພັດທະນາທ້ອງຖິ່ນຕົນ, ໃຫ້ສາມາດເຂົ້າເຖິງການບໍລິການດ້ານພື້ນຖານໂຄງລ່າງ ຕາມເປົ້າໝາຍລົບລ້າງຄວາມທຸກຍາກແຫ່ງຊາດ.

3. **ການແບ່ງຄວາມຮັບຜິດຊອບຂັ້ນຕ່າງໆໃນຂະແໜງ ຍທຂ.**

- **ກະຊວງ ຍທຂ ມີໜ້າທີ່ ແລະຄວາມຮັບຜິດຊອບດ້ານມະຫາພາກດັ່ງນີ້:**

1) ຄົ້ນຄວ້າ ແລະຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃຫ້ເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະໂຄງການລະດັບຊາດຂອງຂະແໜງຄົມມະນາຄົມ ໄປສະນີ ການ ແລະຂົນສົ່ງ. ພ້ອມທັງຄົ້ນຄວ້າຜັນຂະຫຍາຍອອກເປັນບັນດານິຕິກຳເຊັ່ນ: ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ກຳນົດໝາຍດ້ານມາດຕະຖານເຕັກນິກ, ລາຄາຫົວໜ່ວຍ ແລະລະບຽບການອັນຈຳເປັນສຳລັບການຄຸ້ມຄອງມະຫາພາກຕາມຂະແໜງການ ພ້ອມທັງຈັດຕັ້ງເຜີຍແຜ່ໃຫ້ທົ່ວສັງຄົມໄດ້ຮັບຊາບ ແລະປະຕິບັດ. ຄຸ້ມຄອງຊັບສິນທີ່ດິນຂອງຂະແໜງ ຍທຂ ແລະຂື້ນແຜນຄວາມຕ້ອງການດ້ານງົບປະມານ, ຈັດຕັ້ງການປະມູນ, ຈັດຊື້-ຈັດຈ້າງ ບັນດາໂຄງການລະດັບກະຊວງ.
2) ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າຊອກຫາແຫລ່ງທຶນທັງພາຍໃນ ແລະຕ່າງປະເທດ ເພື່ອຈັດຕັ້ງປະຕິບັດບັນດາແຜນການ, ແຜນງານ ແລະໂຄງການໃນຂະແໜງການຂອງຕົນ.
3) ຄົ້ນຄວ້າ ແລະຂື້ນແຜນຝຶກອົບຮົມ, ຍົກລະດັບ ແລະບຳລຸງກໍ່ສ້າງ, ກຳນົດໂຄງປະກອບກົງຈັກການຈັດຕັ້ງ, ກຳນົດມາດຖານຕຳແໜ່ງງານ ຂອງພະນັກງານ-ລັດຖະກອນໃນຂະແໜງການຂອງຕົນ.
4) ຄົ້ນຄວ້າວິທະຍາສາດ ແລະເຜີຍແຜ່ນຳໃຊ້ວິທະຍາສາດ, ວິທະຍາການ ແລະເຕັກໂນໂລຊີໃໝ່ ເຂົ້າໃນການພັດທະນາວຽກງານຕ່າງໆໃນຂະແໜງການຕົນ.
5) ສຸມໃສ່ຊ່ວຍຊູ້ຍູ້ໜູນທ້ອງຖິ່ນ ແລະບັນດາຫົວໜ່ວຍຈຸລະພາກ; ຕິດຕາມກວດກາ, ປະເມີນຜົນ, ສະຫລຸບສັງລວມ, ຕີລາຄາ ແລະຖອດຖອນບົດຮຽນ.

- **ການຄຸ້ມຄອງດ້ານວິຊາສະເພາະຂັ້ນກະຊວງ.**

1) ໃຫ້ຫ້ອງການ, ບັນດາກົມ, ກອງ, ອົງການ ແລະສະຖາບັນ ກວດກາຄືນບັນດານິຕິກຳຂອງຕົນທີ່ມີແລ້ວ, ພ້ອມກັນນັ້ນ ກໍ່ໃຫ້ກວດກາ, ສະຫລຸບສັງລວມ ແລະຕີລາຄາ ການຈັດຕັ້ງປະຕິບັດບັນດານິຕິກຳດັ່ງກ່າວວ່າ ວຽກໃດທີ່ໄດ້ປະຕິບັດແລ້ວ, ວຽກໃດຍັງບໍ່ທັນໄດ້ປະຕິບັດ, ວຽກໃດທີ່ຈະມອບເພີ່ມໃຫ້ແຂວງ ແລະເມືອງ, ຖ້າເຫັນວ່ານິຕິກຳໃດບໍ່ສອດຄ່ອງ ແລະບໍ່ແທດເໝາະກໍ່ຕ້ອງຮີບຮ້ອນປັບປຸງ ພ້ອມທັງກໍ່ສ້າງໃໝ່ບັນດານິຕິກຳ ແລະລະບຽບການທີ່ເຫັນວ່າມີຄວາມຈຳເປັນ ເພື່ອຮອງຮັບໃຫ້ແກ່ການທົດລອງເຮັດສາມສ້າງໃນ 51 ເມືອງ ແລະ 105 ບ້ານເປົ້າໝາຍ. ພ້ອມກັນນັ້ນ ກໍ່ໃຫ້ເປັນເຈົ້າການປະສານສົມທົບກັບທ້ອງຖິ່ນຜັນຂະຫຍາຍ ແລະຈັດຕັ້ງປະຕິບັດຕາມຂອບເຂດສິດ, ໜ້າທີ່ ແລະພາລະບົດບາດຂອງຕົນ.
2) ໃຫ້ກົມຈັດຕັ້ງ ແລະພະນັກງານຈັດຕັ້ງປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 104/ນຍ, ລົງວັນທີ 4/9/2012 ວ່າດ້ວຍການຄຸ້ມຄອງພະນັກງານ-ລັດຖະກອນ ຕາມຂະແໜງການຢູ່ທ້ອງຖິ່ນຢ່າງເຂັ້ມງວດ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນປັບປຸງຂໍ້ຕົກລົງຂອງລັດຖະມົນຕີວ່າການ, ສະບັບເລກທີ

9554/ຍທຂ, ລົງວັນທີ 16/7/2009 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ຍທຂ ເມືອງ ໂດຍປັບປຸງໂຄງປະກອບກົງຈັກການຈັດຕັ້ງໃຫ້ມີ 3 ໜ່ວຍງານຫລັກຄື: ໜ່ວຍງານບໍລິຫານ-ການເງິນ, ໜ່ວຍງານຂົວທາງ-ເຄຫາຜັງເມືອງ ແລະໜ່ວຍງານຂົນສົ່ງ; ປັບປຸງຂໍ້ຕົກລົງຂອງລັດຖະມົນຕີວ່າການ, ສະບັບເລກທີ 9555/ຍທຂ, ລົງວັນທີ 16/7/2009 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກ ຍທຂ ແຂວງ ແລະນະຄອນຫລວງ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປັບປຸງແບບແຜນວິທີເຮັດວຽກ ຂອງ ອບພຕ ແລະຫ້ອງການ ຍທຂ ເມືອງ.

3) ໃຫ້ກົມກວດກາ ແລະກົມແຜນການ-ການຮ່ວມມື ເປັນເຈົ້າການຕິດຕາມກວດກາການປະຕິບັດແຜນພັດທະນາ ແຕ່ລະປີຂອງຂະແໜງ ຍທຂ; ສ້າງຕັ້ງຂະແໜງກວດກາຢູ່ບັນດາພະແນກ ຍທຂ ແຂວງທີ່ມີຄວາມພ້ອມທາງ ດ້ານວິຊາການ ແລະບຸກຄະລາກອນແລ້ວ.

4) ໃຫ້ກົມຂົວທາງ ຕິດຕາມ-ກວດກາການຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະລະ ບຽບການຕ່າງໆໃນຂົງເຂດຂົວທາງ; ກວດກາ ແລະຄວບຄຸມຄຸນນະພາບຂອງບັນດາໂຄງການກໍ່ສ້າງຂົວທາງ ໂດຍອີງຕາມມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍທີ່ລັດຖະບານໄດ້ຮັບຮອງເອົາແລ້ວ; ພ້ອມທັງປະ ສານສົມທົບກັບທ້ອງຖິ່ນຕິດຕາມ-ກວດກາວຽກງານສິ່ງແວດລ້ອມ ແລະສັງຄົມຂອງບັນດາໂຄງການກໍ່ສ້າງຂົວ ທາງ; ວາງແຜນ, ຄຸ້ມຄອງ, ບູລະນະຮັກສາ ແລະຂະຫຍາຍຕາໜ່າງເສັ້ນທາງຫລວງແຫ່ງຊາດໃນຂອບເຂດ ທົ່ວປະເທດ.

5) ໃຫ້ກົມຂົນສົ່ງ ຕິດຕາມ-ກວດກາ ການຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະ ລະ ບຽບການຕ່າງໆໃນຂົງເຂດຂົນສົ່ງ; ຕິດຕາມ-ກວດກາ ການຄຸ້ມຄອງການຂົນສົ່ງໂດຍສານ ແລະສິນຄ້າຂອງ ທ້ອງຖິ່ນໃຫ້ຖືກຕ້ອງຕາມລະບຽບການ; ເກັບກຳ-ສັງລວມ, ຄຸ້ມຄອງບັນຊີ ແລະຂໍ້ມູນສະຖິຕິຂົນສົ່ງທາງບົກ, ພາຫະນະກົນຈັກ, ການຈະລາຈອນ, ການຂັບຂີ່ ແລະອຸປະຕິເຫດໃນຂອບເຂດທົ່ວປະເທດ, ພ້ອມທັງປະສານ ສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າວິໄຈບັນດາຂໍ້ມູນສະຖິຕິດັ່ງກ່າວ ເພື່ອແກ້ໄຂບັນຫາຕ່າງໆໃນ ຂົງເຂດຂົນສົ່ງ.

6) ໃຫ້ກົມເຄຫາ-ຜັງເມືອງ ແລະນ້ຳປະປາ ຕິດຕາມ-ກວດກາການຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ຂໍ້ ຕົກລົງ, ຄຳສັ່ງ ແລະລະບຽບການຕ່າງໆໃນຂົງເຂດເຄຫາ-ຜັງເມືອງ ແລະນ້ຳປະປາ; ຕິດຕາມ-ກວດກາດ້ານ ຄຸນນະພາບຂອງບັນດາໂຄງການກໍ່ສ້າງເຄຫາ-ຜັງເມືອງ ແລະນ້ຳປະປາ ໂດຍອີງຕາມມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍກໍ່ສ້າງເຄຫາສະຖານ ທີ່ລັດຖະບານໄດ້ຮັບຮອງເອົາແລ້ວ. ຄົ້ນຄວ້າປະກອບຄຳເຫັນຕໍ່ ບັນດາໂຄງການລົງທຶນຂະໜາດໃຫຍ່ທີ່ລັດຖະບານເປັນຜູ້ອະນຸມັດ; ສຳຫລວດ-ອອກແບບ ແລະສ້າງແຜນຜັງ ເມືອງລະດັບຊາດ, ແຜນຜັງເມືອງລະດັບພາກ ແລະແຜນຜັງເມືອງລະດັບແຂວງ.

7) ໃຫ້ກົມໂຍທາທິການທາງນ້ຳ ຕິດຕາມ-ກວດກາການຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳ ສັ່ງ ແລະລະບຽບການຕ່າງໆໃນຂົງເຂດໂຍທາທິການທາງນ້ຳ; ຕິດຕາມ-ກວດກາດ້ານຄຸນນະພາບຂອງບັນດາ ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ໂດຍອີງຕາມມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍກໍ່ສ້າງທາງ ນ້ຳ; ຄຸ້ມຄອງການຕໍ່ເຮືອໂດຍສານຂະໜາດ 200 ບ່ອນນັ່ງຂຶ້ນໄປ ແລະເຮືອບັນທຸກສິນຄ້າຂະໜາດ 500 ໂຕນຂຶ້ນໄປ; ອອກອະນຸຍາດຂຸດຄົ້ນຫີນ, ແຮ່, ຊາຍ, ດິນດຳ ທີ່ມີເນື້ອທີ່ແຕ່ 5 ເຮັກຕາຂຶ້ນໄປ; ຄຸ້ມຄອງ ການຂົນສົ່ງ ທາງນ້ຳລະຫວ່າງປະເທດ.

8) ໃຫ້ກົມການບິນພົນລະເຮືອນ, ກອງຄຸ້ມຄອງສະໜາມບິນ ແລະກອງຄຸ້ມຄອງການຈະລາຈອນທາງອາກາດ ຕິດຕາມ-ກວດກາການການຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະລະບຽບການ ຕ່າງໆໃນຂົງເຂດການບິນພົນລະເຮືອນ; ປະສານສົມທົບ ແລະຊຸກຍູ້ການຈັດຕັ້ງປະຕິບັດບັນດາສົນທິສັນຍາ ແລະສັນຍາຕ່າງໆ; ຄົ້ນຄວ້ານະໂຍບາຍກ່ຽວກັບຄ່າທຳນຽມ, ຄ່າບໍລິການ ແລະຄ່າຂົນສົ່ງທາງອາກາດ; ຄຸ້ມ ຄອງ ແລະບໍລິການສະໜາມບິນ, ອາຄານໂດຍສານ, ຮັກສາຄວາມປອດໄພ, ດັບເພີງ-ກູ້ໄພ ແລະການຮັບ

ໃຊ້ສາທາລະນະປະໂຫຍດອື່ນໆ; ຄຸ້ມຄອງ, ບັນຊາ ແລະບໍລິການການບິນຜ່ານເຂດນ່ານຟ້າຂອງ ສປປ ລາວ;

- **ຂັ້ນພະແນກ ຍທຂ ແຂວງ ແລະນະຄອນຫລວງ.**

  ປະຕິບັດຕາມກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະລະບຽບການຕ່າງໆຂອງຂະແໜງ ຍທຂ ກໍ່ຄືພາກສ່ວນກ່ຽວຂ້ອງຕ່າງໆຢ່າງເຂັ້ມງວດ; ເປັນເສນາທິການໃຫ້ແກ່ກະຊວງ ແລະອົງການປົກຄອງແຂວງ ແລະ ນະຄອນຫລວງ; ຊີ້ນຳໂດຍກົງບັນດາຫ້ອງການ ຍທຂ ເມືອງ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂື້ນແຜນງົບປະມານດ້ານການເງິນ, ການລົງທຶນ, ຮັບຜິດຊອບໂດຍກົງການປະມູນ, ການຈັດຊື້-ຈັດຈ້າງລະດັບແຂວງ; ຮັບຜິດຊອບຄຸ້ມຄອງ ແລະນຳໃຊ້ຊັບສິນຕ່າງໆໃນຂັ້ນຄຸ້ມຄອງຂອງຕົນ; ຄຸ້ມຄອງ, ຊີ້ນຳ, ຕິດຕາມກວດການ ການປະຕິບັດໂຄງການຕ່າງໆຂອງບັນດາບໍລິສັດທີ່ປຶກສາ ແລະ ບໍລິສັດຮັບເໝົາກໍ່ສ້າງໃນຂອບເຂດທີ່ຕົນຮັບຜິດຊອບ ໂດຍຕ້ອງຮັບປະກັນດ້ານຄຸນນະພາບຕາມມາດຕະຖານເຕັກນິກ ແລະໂດຍເອົາລາຄາຫົວໜ່ວຍທີ່ກະຊວງກຳນົດໄວ້ເປັນບ່ອນອີງ; ຄົ້ນຄວ້າສະເໜີປັບປຸງລາຄານ້ຳປະປາຕາມສູດຄິດໄລ່ຂອງກະຊວງ ແລະຂໍອະນຸມັດຈາກເຈົ້າແຂວງ ແລະເຈົ້າຄອງນະຄອນຫລວງ; ຄຸ້ມຄອງການດຳເນີນທຸລະກິດ ແລະກິດຈະ ການຕ່າງໆຂອງຂະແໜງ ຍທຂ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ; ຄຸ້ມຄອງຂໍ້ມູນສະຖິຕິຕ່າງໆຂອງຂະແໜງ ຍທຂ ໃນຂົງເຂດຕົນຮັບຜິດຊອບ ພ້ອມທັງລາຍງານໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ.

- **ຂັ້ນຫ້ອງການ ຍທຂ ເມືອງ.**

  ປະຕິບັດຕາມກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະລະບຽບການຕ່າງໆຂອງຂະແໜງ ຍທຂ ກໍ່ຄືພາກສ່ວນກ່ຽວຂ້ອງຕ່າງໆຢ່າງເຂັ້ມງວດ; ເປັນເສນາທິການໃຫ້ແກ່ພະແນກ ຍທຂ ແຂວງ, ນະຄອນຫລວງ ແລະ ອົງການປົກຄອງເມືອງ; ຊີ້ນຳການຈັດຕັ້ງປະຕິບັດວຽກງານ ຍທຂ ຢູ່ຂັ້ນບ້ານ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂື້ນແຜນງົບປະມານດ້ານການເງິນ, ການລົງທຶນ, ຮັບຜິດຊອບໂດຍກົງການປະມູນ, ການຈັດຊື້-ຈັດຈ້າງລະດັບເມືອງ; ຄຸ້ມຄອງ, ຊີ້ນຳ ແລະຕິດຕາມກວດກາ ການປະຕິບັດໂຄງການຕ່າງໆຂອງບັນດາບໍລິສັດທີ່ປຶກສາ ແລະບໍລິສັດຮັບເໝົາກໍ່ສ້າງໃນຂອບເຂດເມືອງຂອງຕົນ ໂດຍຕ້ອງຮັບປະກັນດ້ານຄຸນນະພາບຕາມມາດຕະຖານເຕັກນິກ ແລະໂດຍເອົາລາຄາຫົວໜ່ວຍທີ່ກະຊວງກຳນົດໄວ້ເປັນບ່ອນອີງ; ຈັດຕັ້ງຂື້ນທະບຽນລົດຈັກ, ລົດໄຖນາ ແລະເຮືອຈັກທຸກປະເພດ ພ້ອມທັງສອບເສັງໃບຂັບຂີ່ລົດຈັກ; ອະນຸຍາດ ແລະຄຸ້ມຄອງການປຸກສ້າງ; ຄຸ້ມຄອງຮ້ານຂາຍເຄື່ອງອາໄລ່ ແລະສ້ອມແປງຍານພາຫະນະທຸກປະເພດ; ຄຸ້ມຄອງຊັບສິນທີ່ດິນຂອງຂະແໜງ ຍທຂ ນັບທັງເຂດສະຫງວນຂອງທາງໃນເມືອງຂອງຕົນ; ຄຸ້ມຄອງຂໍ້ມູນສະຖິຕິຕ່າງໆຂອງຂະແໜງ ຍທຂ ໃນຂົງເຂດຕົນຮັບຜິດຊອບ ພ້ອມທັງລາຍງານໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ; ປະຕິບັດໜ້າທີ່ເຝົ້າລະວັງ ແລະເປັນເຈົ້າການບັນຊາແກ້ໄຂສະພາບສຸກເສີນຕ່າງໆ ທີ່ເກີດຈາກໄພທຳມະຊາດໃນຂົງເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງລາຍງານຂັ້ນເທິງຢ່າງທັນການ; ສົມທົບອຳນາດການປົກຄອງບ້ານຄົ້ນ ຄວ້າວິທີການຄຸ້ມຄອງວຽກງານ ຍທຂ ຂັ້ນບ້ານ.

4. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

**ສົມມາດ ພົລເສນາ**

<u>**ສຳເນົາບ່ອນສົ່ງ**</u>:

- ບັນດາທ່ານເຈົ້າແຂວງ ແລະເຈົ້າຄອງນະຄອນຫລວງວຽງຈັນ ເພື່ອຊີ້ນຳ ແລະປະສານສົມທົບ.
- ບັນດາທ່ານເຈົ້າເມືອງ (51 ເມືອງເປົ້າໝາຍທົດລອງ) ເພື່ອຊີ້ນຳ ແລະປະສານສົມທົບ.